# "ສະພາຮ່ວມ ເອີຣົບ ສະແດງ ຄວາມເປັນຫ່ວງ ເປັນໃຍ ຕໍ່ສະຖານະພາບ ທາງດ້ານ ສິດທິມະນຸດໃນ ສປປລາວ"

ເມື່ອ ວັນພະຫັດ ວັນທີ ໑໕ ມັງກອນ ໒໐໑໔, ສະພາຮ່ວມເອີຣົບ ໄດ້ລົງມະຕິຮັບເອົາກົດໝາຍຮຽກຮ້ອງ ໃຫ້ຣັຖບານ ສປປລາວ ໃຫ້ຄວາມກະຈ່າງແຈ້ງ ເຖິງ ຊາຕາກັມ ຂອງ ທ່ານ ສົມບັດ ສົມພອນ, ແລະ ໃຫ້ຕອບຕໍ່ຄໍາຖາມ ຈໍານວນຫຼວງຫຼາຍທີ່ຍັງຄ້າງຄາຢູ່ ກ່ຽວກັບການຫາຍສາບສູນຂອງຜູ້ກ່ຽວ.

ນອກນັ້ນ ມະຕິ ດັ່ງກ່າວຍັງໄດ້ຮຽກຮ້ອງໃຫ້ທາງການ ສປປລາວ ຮັບເອົາການຊ່ວຍເຫຼືອຂອງນັກຊ່ຽວຊານ ຕ່າງປະເທດ, ເພາະການເມີນເສີຍຂອງທາງການ ສປປລາວ ຕໍ່ກໍຣະນີດັ່ງກ່າວເຮັດໃຫ້ເກີດການສົງໃສວ່າ ທາງການ ສປປລາວ ມີສ່ວນກ່ຽວຂ້ອງໃນການຫາຍສາບສູນ ຂອງ ທ່ານ ສົມບັດ ສົມພອນ.

ມະຕິສະບັບດັ່ງກ່າວຍັງໄດ້ບົ່ງວ່າ ກໍຣະນີ ຫາຍສາບສູນ ໂດຍຖືກບັງຄັບ, ຍັງຄົງເປັນ ອຸປະສັກອັນໃຫຍ່ຫຼວງທີ່ ຈະກີດກັ້ນ ບໍ່ໃຫ້ ສປປລາວ ຖືກຮັບເຂົ້າສັງກັດຢູ່ໃນ ກັມາທິການ ດ້ານສິດທິມະນຸດ ແຫ່ງ ອົງການສະຫະປະຊາຊາດ. ມະຕິ ດັ່ງກ່າວ ຈຶ່ງໄດ້ຮຽກຮ້ອງຕໍ່ ຣັຖບານ ສປປລາວ, ໃຫ້ ທໍາ ການ ສືບສວນ ຢ່າງຄັກແນ່ແລະຄົບຖ້ວນ, ໂດຍບໍ່ມີຄວາມ ບິດເບືອນ, ແລະ ຢ່າງມີປະສິດຕິພາບ ເຖິງກໍຣະນີ ຫາຍສາບສູນດັ່ງກ່າວ, ໃຫ້ກໍາຈັດການລະເມີດຢ່າງເນື່ອງນິດ ຕໍ່ການເຄົາຣົບ ສິດທິມະນຸດ ແລະ ການເມືອງ , ສິດທິ ດ້ານການປາກເວົ້າ, ການ ຊຸມນຸມ ໃນ ສປປລາວ, ແລະໃຫ້ນັບຖື ແລະປົກປ້ອງ ສິດທິຂອງນັກຕໍ່ສູ້ເພື່ອສິດທິມະນຸດ ປົກປ້ອງສິດທິຊົນເຜົ່ານ້ອຍ ແລະບັນດາສະມາຊິກຂອງອົງການ ທີ່ບໍ່ຂຶ້ນກັບລັຖະບານ, ແລະ ສິດທິ ທາງດ້ານສາສນາແລະການເຊື່ອຖື.

ມະຕິສະບັບດັ່ງກ່າວຍັງໄດ້ຮຽກຮ້ອງໃຫ້ທາງການ ສປປລາວ "ຣັບຮອງເອົາຢ່າງຮີບດ່ວນກົດໝາຍສາກົນ ວ່າ ດ້ວຍການປົກປ້ອງບຸກຄົນຕໍ່ການຫາຍສາບສູນ" ຊຶ່ງທາງການ ສປປລາວ ໄດ້ລົງນາມຮັບເຊັນເມື່ອ ປີ 2008, ພ້ອມຍັງ ໄດ້ຮຽກຮ້ອງໃຫ້ຄະນະຜູ້ນໍາຂອງ ສປປລາວ ທໍາການປະຕິຮູບສູ່ເສັ້ນທາງການເຄົາຣົບສິດທິມະນຸດ, ເພື່ອໃຫ້ສອດຄ່ອງ ກັບເງື່ອນໄຂຂອງສັນຍາສາກົນຊຶ່ງຕົນໄດ້ລົງນາມຮັບເຊັນ.

ນອກຈາກນັ້ນ, ສະພາຮ່ວມເອີຣົບ ຍັງໄດ້ສະແດງຄວາມວິຕົກກັງວົນຕໍ່ບັນຫາການຂັບໄລ່ປະຊາຊົນອອກຈາກ ບ້ານເຮືອນແລະທີ່ດິນຂອງເຂົາເຈົ້າໂດຍບໍ່ມີຄ່າຕອບແທນ, ແລະຕໍ່ບັນຫາສໍ້ຣາຊບັງຫຼວງ ໃນ ສປປລາວ.

ຂະບວນການລາວເພື່ອສິດທິມະນຸດ ຂໍສະແດງຄວາມຊື່ນຊົມຕໍ່ທ່າທີຂອງບັນດາສະມາຊິກສະພາເອີຣົບ, ແລະ ຂໍຂອບອົກຂອບໃຈໃນການອູ້ມຊູຊົນຊາດທີ່ສະແດງຫາປະຊາທິປະໄຕ, ຄວາມຍຸດຕິທັມດ້ານສັງຄົມ, ແລະຄວາມໂປ່ງໃສ ໃນການບໍຣິຫານປະເທດໃນ ສປປລາວ.

ຂະບວນການລາວເພື່ອສິດທິມະນຸດ ສະແດງຄວາມເສັຽໃຈຕໍ່ການເມີນເສີຍຂອງຄະນະກັມະທິການຮ່ວມ ດ້ານ ສິດທິມະນຸດ ຂອງກຸ່ມເອຊຽນ, ຕໍ່ໜ້າການລະເມີດສິດທິມະນຸດ ໃນ ສປປລາວ ແລະໃນຂົງເຂດເອຊຽນ.

ຂະບວນການລາວເພື່ອສິດທິມະນຸດ ມີຄວາມເພິ່ງພໍໃຈຕໍ່ມະຕິຂອງສະພາເອີຣົບ, ແລະຮຽກຮ້ອງຕໍ່ປະຊາຄົມ ສາກົນ, ໃຫ້ພັກດັນທາງການລາວ, ທັງທາງດ້ານເສຖກິດ, ເພື່ອໃຫ້ເງື່ອນໄຂຂອງມະຕິສະບັບນີ້ຖືກນໍາມາປະຕິບັດ ຢ່າງຮີບ ດ່ວນ.